ຊື່ລູກຄ້າ ______________________

ເລກທີສຳນວນ ______________________

ວັນທີ ______________________

ຄາວຕີ້ ______________________

ເບີໂທລະສັບຂອງຄາວຕີ້ ______________________

# ກົດລະບຽບສຳລັບສຳນວນ CalWORKs ຂອງທ່ານໄດ້ມີການປ່ຽນແປງ. ກະລຸນາອ່ານໃຫ້ລະອຽດ.

ນັບຕັ້ງແຕ່ ________________ (ວັນທີ), ສຳນວນ CalWORKs ຂອງທ່ານຈະປ່ຽນແປງຈາກການລາຍງານປະຈຳປີໄປເປັນການລາຍງານເຄິ່ງປີ ເພາະວ່າດຽວນີ້ ສຳນວນຂອງທ່ານລວມມີການຊ່ວຍເຫຼືອສຳລັບຜູ້ໃຫຍ່ທີ່ມີສິດໄດ້ຮັບ. ພາຍໃຕ້ການລາຍງານເຄິ່ງປີ, ທ່ານຈຳເປັນຕ້ອງລາຍງານສອງຄັ້ງຕໍ່ປີ ແທນທີ່ຈະເປັນຄັ້ງດຽວຕໍ່ປີ. ໜຶ່ງໃນການລາຍງານເຫຼົ່ານັ້ນຈະແມ່ນແບບຟອມການກຳນົດຄືນໃໝ່/ການຢັ້ງຢືນຄືນໃໝ່ປະຈຳປີຂອງທ່ານ (SAWS 2 PLUS). ຫົກເດືອນຫຼັງຈາກທ່ານສຳເລັດ SAWS 2 PLUS ຂອງທ່ານ, ຈະມີການສົ່ງບົດລາຍງານສະຖານະການມີສິດໄດ້ຮັບປະຈຳເຄິ່ງປີ (SAR 7) ໄປໃຫ້ທ່ານທາງໄປສະນີ ແລະບອກໃຫ້ທ່ານຮູ້ວ່າມັນຈະຄົບກຳນົດເມື່ອໃດ. ທ່ານບໍ່ຕ້ອງລາຍງານ ເມື່ອມີຄົນຍ້າຍເຂົ້າ ຫຼືຍ້າຍອອກເຮືອນຂອງທ່ານ ຈົນກວ່າຈະຄົບກຳນົດການລາຍງານຄັ້ງຕໍ່ໄປຂອງທ່ານ (SAWS 2 PLUS ຫຼື SAR 7). ກົດລະບຽບລະດັບການລາຍງານລາຍໄດ້ (Income Reporting Threshold, IRT) ແມ່ນຄືກັນພາຍໃຕ້ການລາຍງານປະຈຳເຄິ່ງປີຄື: ເມື່ອທ່ານລາຍງານລາຍໄດ້ທີ່ກາຍຈາກ IRT ຂອງທ່ານ, ທາງຄາວຕີ້ຈະຫຼຸດເງິນຊ່ວຍເຫຼືອຂອງທ່ານລົງ ຫຼືຢຸດໄປ.

ແຈ້ງການນີ້ມີລາຍລະອຽດກ່ຽວກັບຂໍ້ກຳນົດການລາຍງານເຄິ່ງປີ. ໃຫ້ຖາມກັບພະນັກງານຂອງທ່ານ ຫຼືໂທຫາທາງຄາວຕີ້ ຖ້າທ່ານມີຄຳຖາມກ່ຽວກັບສິ່ງທີ່ຈະລາຍງານ ແລະຈະລາຍງານເມື່ອໃດ.

ທ່ານຈະໄດ້ຮັບແຈ້ງການແຍກຕ່າງຫາກກ່ຽວກັບການປ່ຽນແປງໃດໜຶ່ງຕໍ່ກັບຂໍ້ກຳນົດການລາຍງານ CalFresh ຂອງທ່ານ.

## ກົດລະບຽບການລາຍງານ

ພາຍໃຕ້ການລາຍງານປະຈຳປີ, ທ່ານຈຳເປັນຕ້ອງປະກອບແຕ່ການກຳນົດເງິນຊ່ວຍເຫຼືອປະຈຳປີຄືນໃໝ່ເທົ່ານັ້ນ.
ພາຍໃຕ້ການລາຍງານເຄິ່ງປີ ທີ່ເປັນການເພີ່ມເຕີມໃສ່ການກຳນົດປະຈຳປີຄືນໃໝ່ນັ້ນ, ທ່ານຈຳເປັນຕ້ອງສົ່ງມອບໃບ SAR 7 ປີລະເທື່ອ (6 ເດືອນຫຼັງຈາກການກຳນົດປະຈຳປີຄືນໃໝ່ຂອງທ່ານ). ຈະສົ່ງໃບ SAR 7 ໄປໃຫ້ທ່ານທາງໄປສະນີ.

ຄືກັນກັບການລາຍງານປະຈຳປີ, ທ່ານຍັງຈະໄດ້ຮັບໜັງສືນັດໝາຍທາງໄປສະນີນຳ ເມື່ອການກຳນົດຄືນໃໝ່ຂອງທ່ານຄົບກຳນົດ.
ຖ້າທ່ານບໍ່ໄປຕາມການນັດໝາຍການກຳນົດຄືນໃໝ່ ແລະບໍ່ໄດ້ນັດໄປໃນທ້າຍເດືອນ, ເງິນຊ່ວຍເຫຼືອຂອງທ່ານຈະຖືກຢຸດ.

ຕົວຢ່າງ ໃນວັນທີ 18 ມີນາ, ທ່ານໄດ້ຮັບໜັງສືນັດໝາຍຈາກທາງຄາວຕີ້ ທີ່ເວົ້າເຖິງ ການນັດໝາຍການກຳນົດຄືນໃໝ່ຂອງທ່ານໃນວັນທີ 4 ເມສາ. ຖ້າທ່ານບໍ່ໄປຕາມການນັດໝາຍ ແລະບໍ່ໄດ້ນັດໄປໃນທ້າຍເດືອນເມສາ, ສຳນວນຂອງທ່ານຈະຖືກຢຸດໄປໃນວັນທີ 30 ເມສາ.

## ກົດລະບຽບລະດັບການລາຍງານລາຍໄດ້ (IRT)

ຈຳນວນເງິນລາຍໄດ້ທີ່ທ່ານຕ້ອງລາຍງານພາຍໃນ 10 ວັນຈະຍັງຄົງຄືເກົ່າ ພາຍໃຕ້ການລາຍງານເຄິ່ງປີ. ຖ້າລາຍໄດ້ປະຈຳເດືອນທັງໝົດຂອງທ່ານເກີນຈຳນວນ IRT ຂອງທ່ານ, ທ່ານຕ້ອງລາຍງານລາຍໄດ້ໃຫ້ກັບທາງຄາວຕີ້ ພາຍໃນ 10 ວັນ. ດ້ວຍ "ລາຍໄດ້ປະຈຳເດືອນທັງໝົດ" ພວກເຮົາໝາຍເຖິງເງິນໃດໜຶ່ງ ທີ່ທ່ານໄດ້ຮັບ. ທາງຄາວຕີ້ຈະບອກທ່ານວ່າ IRT ຂອງທ່ານແມ່ນເທົ່າໃດ. ພາຍໃຕ້ການລາຍງານເຄິ່ງປີ, IRT ຈະອີງຕາມລາຍໄດ້ທັງໝົດຂອງທ່ານ ແລະຈຳນວນຄົນໃນເຮືອນຂອງທ່ານ. ການມີເກີນ IRT ສາມາດສົ່ງຜົນໃຫ້ມີການຫຼຸດເງິນຊ່ວຍເຫຼືອຂອງທ່ານລົງ ຫຼືການຊ່ວຍເຫຼືອຂອງທ່ານຈະຖືກຢຸດ.

<u>ຕົວຢ່າງ</u>: ຖ້າ IRT ຂອງທ່ານແມ່ນ $1000 ແລະທ່ານມີລາຍໄດ້ $800 ທ່ານບໍ່ຕ້ອງລາຍງານການປ່ຽນແປງຈົນກວ່າຈະຮອດການລາຍງານຄັ້ງຕໍ່ໄປຂອງທ່ານ (SAR 7 ຫຼື SAWS 2 PLUS). ຖ້າທ່ານມີລາຍໄດ້ $1001 ຫຼືຫຼາຍກວ່ານັ້ນ, ທ່ານຕ້ອງລາຍງານໃຫ້ກັບທາງຄາວຕີ້ພາຍໃນ 10 ວັນ. ຖ້າລາຍໄດ້ຈະມີການສືບຕໍ່ເພີ່ມຂຶ້ນ, ເງິນຊ່ວຍເຫຼືອຂອງການຊ່ວຍເຫຼືອເງິນສົດຂອງທ່ານຈະຫຼຸດຕໍ່າລົງ ຫຼືຖືກຢຸດ ໂດຍການແຈ້ງໃຫ້ຊາບໃນ 10 ວັນ.

## ກົດລະບຽບການລາຍງານທີ່ຕ້ອງໄດ້ເຮັດ

ກົດລະບຽບການລາຍງານບັງຄັບຕ້ອງເຮັດຂອງ CalWORKs ສ່ວນໃຫຍ່ແມ່ນຈະຄືກັນພາຍໃຕ້ການລາຍງານເຄິ່ງປີດັ່ງທີ່ຢູ່ພາຍໃຕ້ການລາຍງານປະຈຳປີ. ກົດລະບຽບການລາຍງານເຄິ່ງປີບອກວ່າ ທ່ານຕ້ອງລາຍງານການປ່ຽນແປງຕໍ່ໄປນີ້ໂດຍທາງປາກເປົ່າ ຫຼືເປັນລາຍລັກອັກສອນ ພາຍໃນ 10 ວັນຂອງການປ່ຽນແປງຄື:

- ລາຍໄດ້ກາຍຈາກຈຳນວນຂອງ IRT;
- ມີການປ່ຽນທີ່ຢູ່;
- ມີສະຖານະເປັນນັກໂທດຫຼົບໜີ; ຫຼື
- ເປັນການລະເມີດເງື່ອນໄຂຕ້ອງລາຍງານຕົວເປັນປົກກະຕິ ຫຼືຝາກໂທດຢູ່.

## ກົດລະບຽບການລາຍງານແບບສະໝັກໃຈ

ບໍ່ມີການປ່ຽນແປງຕໍ່ກົດລະບຽບການລາຍງານແບບສະໝັກໃຈຂອງ CalWORKs ພາຍໃຕ້ການລາຍງານເຄິ່ງປີ. ທ່ານອາດຈະລາຍງານຂໍ້ມູນໃດໜຶ່ງດ້ວຍຄວາມສະໝັກໃຈ (ເຊັ່ນ: ການຫຼຸດລົງຂອງລາຍໄດ້ ຫຼືມີຄົນທີ່ບໍ່ມີລາຍໄດ້ຍ້າຍເຂົ້າມາຢູ່ໃນເຮືອນຂອງທ່ານ) ທີ່ອາດຈະເຮັດໃຫ້ເພີ່ມຈຳນວນເງິນທີ່ໃຫ້ກັບທ່ານໄດ້. ຖ້າທ່ານລາຍງານອັນໃດອັນໜຶ່ງດ້ວຍຄວາມສະໝັກໃຈ ທີ່ຈະມີຜົນເຮັດໃຫ້ມີການຫຼຸດລົງຕໍ່ເງິນຊ່ວຍເຫຼືອຂອງທ່ານ, ທາງຄາວຕີ້ຈະບໍ່ຫຼຸດການຊ່ວຍເຫຼືອຂອງທ່ານຈົນກວ່າທ່ານລາຍງານຂໍ້ມູນຢູ່ໃນການລາຍງານທີ່ບັງຄັບໃຫ້ເຮັດຄັ້ງຕໍ່ໄປ.

## ກົດລະບຽບການລາຍງານ Welfare-to-Work

ຖ້າທ່ານໄດ້ຮັບການບໍລິການ ສະຫວັດດີການດ້ານວຽກ (Welfare-to-Work), ທ່ານຕ້ອງສືບຕໍ່ສົ່ງມອບບົດລາຍງານອື່ນໆ ແລະການກວດສອບທີ່ທາງຄາວຕີ້ຕ້ອງການ. ທ່ານຈຳເປັນຕ້ອງສົ່ງມອບຫຼັກຖານນີ້ ເພື່ອໃຫ້ສືບຕໍ່ໄດ້ຮັບການບໍລິການຕ່າງໆເຊັ່ນ ການດູແລເດັກ, ການຂົນສົ່ງ, ແລະເງິນຊື້ປຶ້ມ.